**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງອັດຕະປື

ເລກທີ 03 /ຈຂ.ອປ

ວັນທີ 11 ຣ ພ 1 2020

# ຄຳສັ່ງ

## ວ່າດ້ວຍ ການຊຳລະຄ່າທຳນຽມທາງ ປະຈຳປີ

**ເຖິງ:** ທ່ານ ຫົວໜ້າກອງບັນຊາການທະຫານແຂວງ, ຫົວໜ້າ ກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ທ່ານເຈົ້າເມືອງ 05 ຕົວເມືອງ, ຫົວໜ້າພະແນກການ,ກົມກອງ ແລະ ອົງການທຽບເທົ່າ,ຕະຫລອດຮອດ ບຸກຄົນ, ນິຕິບຸກຄົນ ແລະ ປະຊາຊົນບັນດາຜູ້ທີ່ນຳໃຊ້ຍານ ພາຫະນະທຸກປະເພດ ໃນຂອບເຂດທົ່ວແຂວງ.

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ(ສະບັບປັບປຸງ ) ສະບັບເລກທີ 68/ສພຊ,ລົງວັນທີ 14 ທັນວາ 2015,ໝວດທີ 4, ມາດຕາ 20(ປັບປຸງ) ວ່າດ້ວຍສິດ ແລະ ໜ້າທີ່ ຂອງເຈົ້າແຂວງ, ເຈົ້າຄອງນະຄອນ;
- ອີງຕາມ ລັດຖະບັນຍັດຂອງປະທານປະເທດ ສະບັບເລກທີ 001/ປປທ, ລົງວັນທີ 20 ກັນຍາ 2017 ວ່າດ້ວຍຄ່າທຳນຽມທາງ;
- ອີງຕາມ ຄຳແນະນຳຈັດຕັ້ງປະຕິບັດລັດຖະບັນຍັດວ່າດ້ວຍຄ່າທຳນຽມທາງ ສະບັບເລກທີ 3455/ກງ, ລົງວັນທີ 10 ຕຸລາ 2017;
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 1857/ຫສນຍ,ລົງວັນທີ 06 ສິງຫາ 2020 ເລື່ອງ: ການຈັດຕັ້ງປະຕິບັດເສຍຄ່າທຳນຽມທາງ.

ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ລັດຖະບັນຍັດຂອງປະທານປະເທດ ສະບັບເລກທີ 01/ປປທ, ລົງວັນທີ 20 ກັນຍາ 2017 ວ່າດ້ວຍຄ່າທຳນຽມທາງ ແລະ ບັນດານິຕິກຳຕ່າງໆທີ່ກ່ຽວພັນ ກັບ ການເສຍຄ່າທຳນຽມທາງ ໃຫ້ໄດ້ຮັບການຈັດຕັ້ງປະຕິບັດຢ່າງມີຄວາມເອກະພາບ ໃນຂອບເຂດທົ່ວປະເທດ ເວົ້າລວມ, ເວົ້າສະເພາະແມ່ນແຂວງອັດຕະປືຂອງພວກເຮົາ. ທັງນີ້ກໍ່ເພື່ອຊຸກຍູ້,ສົ່ງເສີມໃຫ້ບຸກຄົນ,ນິຕິບຸກຄົນ ແລະການຈັດຕັ້ງຂັ້ນຕ່າງໆ, ຕະຫລອດຮອດປະຊາຊົນບັນດາຜູ້ທີ່ນຳໃຊ້ຍານພາຫະນະ ໄດ້ຫັນເຂົ້າສູ່ລະບຽບ,ກົດໝາຍ ແລະມີຄວາມຕື່ນຕົວປະກອບສ່ວນມອບພັນທະຂອງຕົນຢ່າງຕັ້ງໜ້າ. ແນໃສ່ບຸກທະລຸດ້ານລາຍຮັບໃຫ້ໄດ້ຕາມທິດທາງແຜນການ, ບົນພື້ນຖານຄວາມຖືກຕ້ອງ,ຄົບຖ້ວນ ແລະ ທັນເວລາ.

## ເຈົ້າແຂວງ ອອກຄຳສັ່ງ :

1. ມອບໃຫ້ ຫົວໜ້າກອງບັນຊາການທະຫານແຂວງ,ຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບແຂວງ ເຈົ້າເມືອງ 05 ຕົວເມືອງ, ຫົວໜ້າພະແນກການ,ກົມກອງ ແລະ ອົງການທຽບເທົ່າ, ຕະຫລອດຮອດບຸກຄົນ,ນິຕິບຸກຄົນ ແລະປະຊາຊົນບັນດາເຜົ່າ ທີ່ນຳໃຊ້ຍານພາຫະນະທຸກປະເພດ ໃນຂອບເຂດທົ່ວແຂວງ, ເປັນເຈົ້າການ,ຊຸກຍູ້ກວດກາ,ເກັບກຳຂໍ້ມູນສະຖິຕິຍານພາຫະນະທຸກປະເພດ ທີ່ຂຶ້ນກັບການຄຸ້ມຄອງຂອງຕົນ(ພາຫະນະທີ່ນຳໃຊ້ສ່ວນລວມ ແລະ ສ່ວນບຸກຄົນ), ໃຫ້ຮີບຮ້ອນໄປຊຳລະຄ່າທຳນຽມທາງປະຈຳປີ ໃຫ້ສຳເລັດໂດຍໄວ (ນອກຈາກພາຫະນະທີ່ໄດ້ຮັບການຍົກເວັ້ນຕາມທີ່ໄດ້ກຳນົດໄວ້ ຢູ່ໃນມາດຕາ 6 ຂອງລັດຖະບັນຍັດຂອງປະທານປະເທດ ສະບັບເລກທີ 001/ປປທ,ລົງວັນທີ 20 ກັນຍາ 2017 ວ່າດ້ວຍຄ່າທຳ ນຽມທາງ);
2. **ຄ່າທຳນຽມທາງປະຈຳປີ** ແມ່ນໃຫ້ເສຍຜ່ານລະບົບທະນາຄານ(ທະນາຄານການຄ້າຕ່າງປະເທດລາວມະຫາຊົນ)ຕາມຊ່ອງທາງຕ່າງໆທີ່ທະນາຄານກຳນົດໄວ້ ຄື: ຊຳລະຜ່ານລະບົບເຄົາເຕີຂອງທະນາຄາ(**Counter**), ຊຳລະຜ່ານແອັບພຣິເຄເຊິນມືຖື(**Mobile Application**), ຊຳລະຜ່ານຕູ້ເອທີເອັມ(**ATM** ),ຊຳລະຜ່ານຕູ້ອັດຕະໂນມັດ(**Kiosk**), ຊຳລະຜ່ານສະຖານທີ່ຈຸດໃຫ້ບໍລິການທີ່ໄດ້ຮັບອະນຸຍາດ (**BCOME** ) ແລະທ່ານຍັງສາມາດຊຳລະຜ່ານຈຸດບໍລິການ ຢູ່ສຳນັກງານສ່ວຍສາອາກອນປະຈຳແຂວງ ແລະສ່ວຍສາອາກອນປະຈຳ 05 ຕົວເມືອງ;
3. ໄລຍະເວລາປົກກະຕິ ຂອງການເສຍຄ່າທຳນຽມທາງ **ແມ່ນເລີ່ມແຕ່ວັນທີ 01 ມັງກອນ ຫາວັນທີ 31 ມີນາ ຂອງທຸກໆປີ** ຕາມທີ່ໄດ້ກຳນົດໄວ້ ຢູ່ໃນ III ຂໍ້ 2 ຂອງຄຳແນະນຳຈັດຕັ້ງປະຕິບັດລັດຖະບັນຍັດວ່າດ້ວຍຄ່າທຳນຽມທາງ ສະບັບເລກທີ 3455/ກງ,ລົງວັນທີ 10 ຕຸລາ 2017.
4. ກໍລະນີຜູ້ນຳໃຊ້ຍານພາຫະນະຫາກມີການລະເມີດ ຈະຖືກປະຕິບັດມາດຕະການ ຕາມແຕ່ລະກໍລະນີ ທີ່ລະບຸໄວ້ໃນ IV ຂໍ້ **2** ຂອງຄຳແນະນຳຈັດຕັ້ງປະຕິບັດລັດຖະບັນຍັດວ່າດ້ວຍຄ່າທຳນຽມທາງ ສະບັບເລກທີ 3455/ກງ, ລົງວັນທີ 10 ຕຸລາ 2017 ຢ່າງເຂັ້ມງວດ ຄື:
   - 4.1 ບໍ່ເສຍຄ່າທຳນຽມທາງ ຕາມວັນເວລາດັ່ງກ່າວ ຈະຖືກປັບໃໝ 0,1% ຕໍ່ວັນ ຂອງມູນຄ່າທີ່ຕ້ອງເສຍຄ່າທຳນຽມທາງປະຈຳປີ;
   - 4.2 ບໍ່ເສຍຄ່າທຳນຽມທາງຂອງປີຜ່ານມາ ນອກຈາກຈະໄດ້ເສຍຄ່າທຳນຽມທາງ ຕາມອັດຕາທີ່ໄດ້ກຳນົດໄວ້ໃນລັດຖະບັນຍັດວ່າດ້ວຍຄ່າທຳນຽມທາງຄືນແລ້ວ ຍັງຈະຖືກປັບໃໝ ດັ່ງນີ້:
   - ຖ້າບໍ່ເສຍຄ່າທຳນຽມທາງໃນປີຜ່ານມາ 01 ປີ ຈະຖືກປັບໃໝ 40% ຂອງມູນຄ່າທີ່ຕ້ອງເສຍຄ່າທຳນຽມທາງປະຈຳປີ.
   - ຖ້າບໍ່ເສຍຄ່າທຳນຽມທາງ ແຕ່ 02 ປີຂຶ້ນໄປ ຈະຖືກປັບໃໝ 60% ຂອງມູນຄ່າທີ່ຕ້ອງເສຍຄ່າທຳນຽມທາງຕໍ່ປີ;
5. ນັບແຕ່ປີ 2020 ເປັນຕົ້ນໄປ ສຳລັບບຸກຄົນ,ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ຊື້ຍານພາຫະນະໃໝ່(ພາຫະນະອອກຮ້ານ)ໃນເດືອນ ຕຸລາ ຫາ ເດືອນທັນວາ ຂອງປີ ແມ່ນໃຫ້ເລີ່ມເສຍຄ່າທຳນຽມທາງໃນປີຖັດໄປ;